ວາລະສານວິທະຍາສາດມະຫາວິທະຍາໄລສຸພານຸວົງ, ຄົ້ນຄວ້າວິໄຈສະຫະສາຂາວິຊາ, ວາລະສານເປີດກວ້າງ
ສະບັບທີ 5, ເຫຼັ້ມທີ 1, ມັງກອນ-ມີຖຸນາ 2019, ເລກທະບຽນ ISSN 2521-0653

ທ່າອຽງໃນອະນາຄົດຂອງມະຫາວິທະຍາໄລ ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ[1]

ຄຳເພົ້າ ຈັນເພັງໄຊ[2], ສົມຄິດ ສ້ອຍນ້ຳ ແລະ ມັນທະນາ ອິນທຸສະມິດ

ສາຂາບໍລິຫານການສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລ ຣາຊະພັດອຸດອນທານີ ປະເທດໄທ

ບົດຄັດຫຍໍ້

ການວິໄຈຄັ້ງນີ້ ມີຈຸດປະສົງເພື່ອສຶກສາທ່າອຽງໃນ ອະນາຄົດທີ່ເປັນໄປໄດ້ຂອງ ມະຫາວິທະຍາໄລ 4 ແຫ່ງທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ (ມະຫາວິທະຍາໄລແຫ່ງຊາດ,ມະຫາວິທະຍາໄລຈຳປາສັກ, ມະຫາວິທະຍາໄລສຸພານຸວົງ ແລະ ມະຫາວິທະຍາໄລສະຫວັນນະເຂດ) ໃນ ສປປ.ລາວ ລະຫວ່າງ ປີ 2016-2030, ໂດຍນຳໃຊ້ເຕັກນິກການວິໄຈອະນາຄົດແບບ EDFR (Ethnographic Delphie Futures Research), ຊຶ່ງການວິໄຈໄດ້ດຳເນີນເປັນ 3 ໄລຍະຄື: 1. ສຶກສາແນວຄິດທິດສະດີ, ການຄຸ້ມຄອງບໍລິຫານການສຶກສາຊັ້ນສູງ ລວມທັງໄດ້ເຮັດການສຳພາດທາງເລິກ (In-depth interview) ຕໍ່ຜູ້ຊ່ຽວຊານອຸດທິ ຈຳນວນ 8 ທ່ານ, 2. ສຶກສາອະນາຄົດຂອງ ມະຫາວິທະຍາໄລໂດຍນຳໃຊ້ເຕັກນິກການວິໄຈ ອະນາຄົດແບບ EDFR ຈຳນວນ 3 ຮອບ ຊຶ່ງມີຜູ້ຊ່ຽວຊານຈຳນວນ 24 ທ່ານ ແລະ 3. ຂຽນອົງປະກອບອະນາຄົດຂອງ ມະຫາວິທະຍາໄລໃນ ສປປ.ລາວ ບົນພື້ນຖານການປະກອບຄຳເຫັນຈາກກຸ່ມຕົວຢ່າງຈຳນວນ 70 ທ່ານ.

ຜົນການວິໄຈພົບວ່າ: ອົງປະກອບທ່າອຽງໃນອະນາຄົດຂອງມະຫາວິທະຍາໄລທີ່ກ່າວມາຂ້າງເທິງນີ້ປະກອບດ້ວຍອົງປະກອບຫຼັກຈຳນວນ 12 ດ້ານດັ່ງນີ້: 1. ດ້ານການ ຄຸ້ມຄອງບໍລິຫານມະຫາວິທະຍາໄລ, 2. ດ້ານຫຼັກສູດ ແລະ ການຮຽນ-ການສອນ, 3. ດ້ານການຄົ້ນຄວ້າວິໄຈ, 4. ດ້ານການບໍລິການວິຊາການ, 5. ດ້ານການອະນຸຮັກວັດທະນະທຳ, 6. ດ້ານບົດບາດຂອງມະຫາວິທະຍາໄລຕໍ່ຊຸມຊົນ, 7. ດ້ານການຮ່ວມມືພາຍໃນ ແລະ ຕ່າງປະເທດ, 8. ດ້ານພື້ນຖານໂຄງລ່າງ/ສິ່ງອຳນວຍຄວາມສະດວກ, 9. ດ້ານຄວາມໂດດເດັ່ນສະເພາະ (identity) ຂອງມະຫາວິທະຍາໄລ, 10. ດ້ານຜູ້ຮຽນ, 11. ດ້ານອາຈານ ແລະ 12. ດ້ານຜູ້ບໍລິຫານ. ໃນ 12 ດ້ານນີ້ມີອົງປະກອບຍ່ອຍຈຳນວນ 103 ຂໍ້ ໃນນັ້ນ ອົງປະກອບຍ່ອຍທີ່ມີທ່າອຽງ (trend) ແລະ ໂອກາດເປັນໄປໄດ້ຫຼາຍທີ່ສຸດມີຈຳນວນ 84 ຂໍ້ຫລືເທົ່າກັບ 82 ເປີເຊັນ ເມື່ອພິຈາລະນາຈາກຄ່າສະເລ່ຍຢູ່ລະຫວ່າງ 4.51-5.00, ຄ່າມັດທະຍະຖານ 3.51 ຂຶ້ນໄປ ແລະ ຄ່າພິໄສລະຫວ່າງຄວໍທາຍນ້ອຍກວ່າ ຫຼື ເທົ່າກັບ 1.50 ແລະ ອົງປະກອບທີ່ມີທ່າອຽງ ແລະ ໂອກາດເປັນໄປໄດ້ຫຼາຍຈຳນວນ 19 ຂໍ້. ສະຫຼຸບຜົນການວິໄຈພົບວ່າອະນາຄົດດ້ານທີ່ 12, 11 ແລະ 5 ຕາມລຳດັບ ມີທ່າອຽງ ແລະ ໂອກາດເປັນໄປໄດ້ຫຼາຍທີ່ສຸດ ແລະ ຈຳເປັນຕ້ອງໄດ້ຮັບການພັດທະນາກ່ອນດ້ານອື່ນ.

ຄຳສຳຄັນ: ອະນາຄົດ, ມະຫາວິທະຍາໄລ, ອົງປະກອບ, ທ່າອຽງ.

---

[1] **ການອ້າງອີງພາສາລາວ:** ຄຳເພົ້າ ຈັນເພັງໄຊ, ສົມຄິດ ສ້ອຍນ້ຳ ແລະ ມັນທະນາ ອິນທຸສະມິດ .(2019). ທ່າອຽງໃນອະນາຄົດຂອງມະຫາວິທະຍາໄລ ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, *ວາລະສານວິທະຍາສາດ ມະຫາວິທະຍາໄລສຸພານຸວົງ, ສະບັບທີ: 2, ເຫຼັ້ມ 1, ໜ້າທີ: 1 - 14.*

[2] ***ຕິດຕໍ່ພົວພັນ***

ຄຳເພົ້າ ຈັນເພັງໄຊ, ກົມການສຶກສາຊັ້ນສູງ ກະຊວງສຶກສາທິການ ແລະ ກິລາ, ໂທລະສັບ/ແຟັກ: 021 212019, ມືຖື: 020 55608670, ອີເມວ: khamphaock@gmail.com.

ARTICLE HISTORY
Received 11 March 2019, Accepted 7 April 2019, Pubblished 22 April 2019.

The Future Trend Of Universities Of Lao People's Democratic Republic

Khamphao CHANPHENGXAY[3], Somkid SROINAM and Muntana INTUSAMITH

Department of Educational Administration, Faculty of Education,
Udon Thani Rajabhat, Thailand

ABSTRACT

This research aimed to study on the future trend of universities of Lao P.D.R. The research has been used Ethnographic Delphie Futures Research (EDFR) and divided into 3 phases including Study on Higher Education Management theories by In-depth interview with 8 experts, Study on the Future of Universities using Ethnographic Delphi Futures Research with 24 experts and Creating Future of Universities in Lao PDR with 70 experts.

Research findings showed that the future trend of universities of Lao PDR (2016-2030) consists of 12 components such as: 1) university management; 2) curriculum and teaching-learning; 3) research; 4) academic services; 5) culture preservation; 6) university's roles in the community; 7) internal and international cooperation; 8) infrastructure/facility; 9) identity (uniqueness) of university; 10) learners; 11) teachers; and 12) administrators. It was found that the 12 components have 103 sub-components and 84sub-components have highest possibilities when considering from Arithmetic Mean 4.51–5.00, Median 3.50 up, and Interquartile Range less than or equal 1.50 and 19 sub-components have high possibilities. Conclusion, Components 12 -administrators, components 11- teachers and components 5 - culture preservation respectively have the highest trend and possibility and be the first priority in development.

Keywords: Future, University, Components, Trend.

[3] ***Correspondence:***
Department of Educational Administration, Faculty of Education, Udon Thani Rajabhat, Thailand, E-mail: khamphaock@gmail.com

ARTICLE HISTORY
Received 11 March 2019, Accepted 7 April 2019, Pubblished 22 April 2019.

1. ພາກສະເໜີ

1.1 ຫຼັກການ ແລະ ເຫດຜົນ

ຈາກການປ່ຽນແປງຂອງໂລກໃນສັດຕະວັດທີ 21 ກຳລັງໄດ້ຮັບອິດທິພົນຈາກປະກົດການທີ່ເອີ້ນວ່າໂລກາພິວັດ (ຈຸລະຊີບ ຊົນອັນໂນ, ພສ. 2557: 382-383), ປະເທດຕ່າງໆໃນໂລກໄດ້ສະແດງໃຫ້ເຫັນເຖິງຄວາມສຳຄັນຂອງການປ່ຽນແປງ (ອຸໄທ ບຸນປຣະເສີດ, ພສ. 2547 : 44-45), ເຮັດໃຫ້ ສປປ.ລາວ ໄດ້ຮັບຜົນກະທົບຢ່າງຫຼວງຫຼາຍ. ສະນັ້ນ, ລັດຖະບານຈຶ່ງຈຳເປັນຕ້ອງເລັ່ງພັດທະນາປະເທດໃນທຸກໆດ້ານຕາມສະພາບປ່ຽນແປງນັ້ນ,ຍຸດທະສາດພັດທະນາເສດຖະກິດ-ສັງຄົມຂອງຊາດໃນປີ 2011-2020 ໄດ້ກຳນົດໄວ້ວ່າ ສປປ ລາວ ຕ້ອງຫລຸດພົ້ນຈາກສະພາບດ້ອຍພັດທະນາທາງດ້ານເສດຖະກິດ-ສັງຄົມ,ປະເທດໄດ້ຮັບການພັດທະນາ ແລະ ປ່ຽນແປງໃໝ່, ພົນລະເມືອງໄດ້ຮັບການສຶກສາ ແລະ ມີການບໍລິການທາງດ້ານສາທາລະນະສຸກທັງປະເທດ, ວັດທະນະທຳທີ່ດີຂອງຊາດໄດ້ຮັບການສົ່ງເສີມ ຜັນຂະຫຍາຍຢ່າງອຸດົມສົມບູນ, ມີລະບົບປະກັນດ້ານສະຫວັດດີການສັງຄົມໃນລະດັບພື້ນຖານ, ມີບຸກຄະລາກອນ ແລະ ກຳລັງແຮງງານທີ່ມີຄວາມສາມາດ ສະໜອງຄວາມຕ້ອງການພື້ນຖານຂອງການພັດທະນາປະເທດ (ພັກປະຊາຊົນປະຕິວັດລາວ, 2011).

ກະຊວງສຶກສາທິການ ແລະ ກິລາໄດ້ກຳນົດແຜນພັດທະນາການສຶກສາ ແລະ ກິລາ 5 ປີ ຄັ້ງທີ 8 ແຕ່ປີ 2016-2020. (ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII (2016-2020)), ປະຈຸບັນມີມະຫາວິທະຍາໄລຂອງລັດຈຳນວນທັງໝົດ 5 ແຫ່ງ, ໃນນັ້ນ 4 ແຫ່ງ ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ (ມະຫາວິທະຍາໄລແຫ່ງຊາດ (ມຊ) ຢູ່ນະຄອນຫຼວງວຽງຈັນ ສ້າງຕັ້ງຂຶ້ນໃນປີ 1996, ມະຫາວິທະຍາໄລຈຳປາສັກ (ມຈ) ຢູ່ແຂວງຈຳປາສັກ ສ້າງຕັ້ງຂຶ້ນໃນປີ 2002, ມະຫາວິທະຍາໄລສຸພານຸວົງ (ມສ) ຢູ່ແຂວງຫຼວງພະບາງ ສ້າງຕັ້ງຂຶ້ນໃນປີ 2004 ແລະ ມະຫາວິທະຍາໄລສະຫວັນນະເຂດ (ມຂ) ຢູ່ແຂວງສະຫວັນນະເຂດ ສ້າງຕັ້ງຂຶ້ນໃນປີ 2010) ແລະ ມະຫາວິທະຍາໄລວິທະຍາສາດ ສຸຂະພາບ (ມວສ) ຂຶ້ນກັບກະຊວງສາທາລະນະສຸກ. ບົດບາດແລະໜ້າທີ່ຂອງມະຫາວິທະຍາໄລເຫລົ່ານີ້ແມ່ນຮັບໃຊ້ 3 ແຜນງານໃຫຍ່ຂອງກະຊວງສຶກສາທິການ ແລະ ກິລາ, ສອດຄ່ອງຕາມແຜນພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ ໂດຍມີພາລະກິດຫຼັກ 4 ດ້ານຄື: ການຈັດການຮຽນ-ການສອນ, ການຄົ້ນຄວ້າວິທະຍາສາດ (ການວິໄຈ), ການບໍລິການວິຊາການ ແລະ ການອະນຸລັກຮັກສາສິລະປະວັດທະນະທຳອັນດີງາມຂອງຊາດ. ນອກນັ້ນມະຫາວິທະຍາໄລຍັງເປັນຂໍກຸນແຈໃນການພັດທະນາຊັບພະຍາກອນມະນຸດ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດຂຶ້ນເຕີບໂຕຂຶ້ນ(ບົດລາຍງານກ່ຽວກັບແຜນປະຕິຮູບການສຶກສາຊັ້ນສູງຕໍ່ກອງປະຊຸມຄົບຄະນະຄັ້ງທີ 5 ຂອງຄະນະກຳມາທິການປະຕິຮູບລະບົບການສຶກສາແຫ່ງຊາດ ປີ ພສ.2554:25). ມະຫາວິທະຍາໄລຕ້ອງມີການປັບຕົວເພື່ອສະແດງບົດບາດໃນການຊີ້ນຳສັງຄົມ ເພາະ ມະຫາວິທະຍາໄລຈະຕ້ອງພົບກັບການປ່ຽນແປງໃນທຸກໆດ້ານໃຫ້ເຂົ້າກັບສະຖານະການ ລວມຊຶ່ງມີທັງໂອກາດ ແລະ ສິ່ງທ້າທາຍ (ແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ 2006-2015).

ສະຖາບັນການສຶກສາຊັ້ນສູງໃນ ສປປ ລາວ ມີຈຳນວນ 101 ສະຖາບັນ (ແຜນພັດທະນາການສຶກສາ ແລະ ກິລາ 5 ປີຄັ້ງທີ 8 ແຕ່ປີ 2016-2020) ໃນນັ້ນມີມະຫາວິທະຍາໄລຂອງລັດ 5 ແຫ່ງ , ວິທະຍາຄານຂອງລັດ 4 ແຫ່ງ, ສະຖາບັນຂອງລັດ 3 ແຫ່ງ, ວິທະຍາໄລຂອງລັດ 20 ແຫ່ງ, ວິທະຍາໄລຂອງເອກະຊົນ 71 ແຫ່ງ (ບໍ່ໄດ້ລວມວິທະຍາໄລສ້າງຄູ). ມະຫາວິທະຍາໄລທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ 4 ແຫ່ງ ມີພະນັກງານ ແລະ ອາຈານ ຈຳນວນ 3,053 ຄົນ (ຍິງ 1,265 ຄົນ), ນັກສຶກສາມີຈຳນວນ 33,109 ຄົນ (ຍິງ 13,958 ຄົນ). ສ່ວນການສອບເສັງຄັດເລືອກລະດັບຊາດເອົານັກສຶກສາເຂົ້າຮຽນໃນມະຫາວິທະຍາໄລແບ່ງເປັນສອງແຜນ ຄື: ນັກສຶກສາໃນແຜນທີ່ບໍ່ໄດ້ຈ່າຍຄ່າຮຽນຈຳນວນ

20% ແລະ ນັກສຶກສາທີ່ໄດ້ຈ່າຍຄ່າຮຽນ ຈຳນວນ 80%, ຫຼັກສູດການຮຽນ-ການສອນ ມີ ຈຳນວນ 270 ຫຼັກສູດ, (ໃນນັ້ນມີຫຼັກສູດປະລິນຍາເອກ 3 ຫຼັກສູດ, ລະດັບປະລິນຍາໂທ 42 ຫຼັກສູດ). ດ້ານນິຕິກຳຫຼັກໃນການຄຸ້ມຄອງສາຍການສຶກສາຊັ້ນສູງ ມີ ກົດໝາຍການສຶກສາແຫ່ງຊາດ 2008,ມີເອກະສານ ການປະເມີນ ແລະ ປັບປຸງ ແຜນພັດທະນາຂະແໜງ ການສຶກສາ 5 ປີ 2013, ມີດຳລັດວ່າດ້ວຍການສຶກ ສາຊັ້ນສູງ 2015 ສະບັບເລກທີ 177/ນຍ, ມີຮ່າງຍຸດ ທະສາດສົ່ງເສີມ ແລະ ການຄຸ້ມຄອງການວິໄຈ, ມີຂໍ້ ກຳນົດກ່ຽວກັບການຄຸ້ມຄອງ ບໍລິຫານມະຫາວິທະ ຍາໄລ ແລະ ເອກະສານນິຕິກຳທີ່ກ່ຽວຂ້ອງຈຳນວນ ໜຶ່ງ.

ສະເພາະມະຫາວິທະຍາໄລ 4 ແຫ່ງທີ່ຂຶ້ນ ກັບກະຊວງສຶກສາທິການ ແລະ ກິລາ ໄດ້ມີການ ປະຕິບັດໜ້າທີ່ຂອງຕົນໃນໄລຍະຜ່ານມາໄດ້ເປັນຢ່າງ ດີ, ເປັນຕົ້ນແມ່ນການຈັດການຮຽນ-ການສອນ ການ ຄົ້ນຄວ້າວິທະຍາສາດ ການບໍລິການວິຊາການ ການ ອະນຸລັກວັດທະນະທຳ ແລະ ອື່ນໆທີ່ກ່ຽວຂ້ອງ, ຊຶ່ງ ຜົນງານດັ່ງກ່າວນີ້ເຮັດໃຫ້ມະຫາວິທະຍາໄລມີການ ພັດທະນາ ແລະ ຂະຫຍາຍຕົວດີພໍສົມຄວນ. ແຕ່ ເມື່ອສັງເກດທາງດ້ານຄວາມຕ້ອງການຕົວຈິງຂອງສັງ ຄົມແລ້ວເຫັນວ່າຍັງມີບັນຫາທີ່ຄ້າງຄາດັ່ງນີ້: ບັນຫາ ການຂະຫຍາຍໂອກາດເຂົ້າຮຽນໃນການສຶກສາຊັ້ນ ສູງຍັງບໍ່ໄດ້ດີເທົ່າທີ່ຄວນ, ຍັງມີນັກຮຽນຈຳນວນ ຫຼາຍທີ່ສົນໃຈຮຽນຕໍ່ຢູ່ມະຫາວິທະຍາໄລ ແຕ່ພັດ ບ່ອນຮຽນມີຈຳກັດ, ບັນຫາການປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງເປັນບັນຫາທ້າທາຍອັນດັບ ໜຶ່ງໃນໄລຍະຜ່ານມາ ແລະ ປະຈຸບັນ, ບັນຫາດ້ານ ອາຈານສອນຈຳນວນໜຶ່ງຢູ່ໃນສະຖາບັນການສຶກສາ ຊັ້ນສູງທັງພາກລັດ ແລະ ເອກະຊົນຍັງມີຄວາມຮູ້ ຄວາມສາມາດຈຳກັດ ແລະ ມີວຸດທິການສຶກສາໃນ ລະດັບປະລິນຍາເອກ ແລະ ປະລິນຍາໂທບໍ່ພຽງພໍ ຕາມອັດຕາສ່ວນທີ່ກຳນົດໄວ້, ບັນຫາດ້ານລະບົບປະ ກັນຄຸນນະພາບການສຶກສາຊັ້ນສູງ ຍັງເປັນບັນຫາໃໝ່, ບັນຫາການວິໄຈ ແລະ ການເຜີຍແຜ່ຜົນການວິໄຈ ດ້ານວິທະຍາສາດທຳມະຊາດ, ດ້ານວິທະຍາສາດສັງ ຄົມ ແລະ ດ້ານອື່ນໆຍັງມີໜ້ອຍ, ບັນຫາງົບລົງທຶນ ເພື່ອພັດທະນາການສຶກສາຊັ້ນສູງຍັງບໍ່ພຽງພໍ ແລະ ບັນຫາດ້ານອື່ນໆທີ່ກ່ຽວຂ້ອງ (ແຜນພັດທະນາຂະແ ໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ 8 ແຕ່ປີ 2016-2020:95)

ຈາກບັນຫາ ແລະ ຄວາມສຳຄັນຕ່າງໆດັ່ງ ກ່າວຂ້າງເທິງນີ້ ຜູ້ວິໄຈມີຖານະທີ່ເປັນຜູ້ມີສ່ວນຮັບ ຜິດຊອບໃນລະດັບມະຫາພາກໃນການສົ່ງເສີມການ ພັດທະນາວຽກງານການສຶກສາຊັ້ນສູງໃນມາຫະວິທະ ຍາໄລໃຫ້ມີຄຸນນະພາບ ຈຶ່ງເຫັນເຖິງຄວາມຈຳເປັນ ແລະ ຄວາມສຳຄັນຂອງການສຶກສາອະນາຄົດຂອງ ມະຫາວິທະຍາໄລ ແລະ ສົນໃຈທີ່ຈະເຮັດການວິໄຈ ກ່ຽວກັບທ່າອຽງອະນາຄົດຂອງມະຫາວິທະຍາໄລໃນ 4 ແຫ່ງທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ດັ່ງໄດ້ກ່າວໄວ້ຂ້າງເທິງນີ້.

1.2 ຈຸດປະສົງຂອງການຄົ້ນຄວ້າ

ເພື່ອສຶກສາທ່າອຽງອະນາຄົດທີ່ເປັນໄປໄດ້ ຂອງມະຫາວິທະຍາໄລໃນ ສປປ ລາວ ລະຫວ່າງ 2016-2030.

1.3 ຄາດຄະເນຜົນໄດ້ຮັບ / ປະໂຫຍດ

1) ເປັນຂໍ້ມູນ ແລະ ເອກະສານອ້າງອີງ ພື້ນຖານ ຊຸກຍູ້ຕໍ່ການກຳນົດວິໄສທັດ, ຍຸດທະສາດ, ແຜນການ ແລະ ວຽກອື່ນໆທີ່ກ່ຽວຂ້ອງ ຂອງຜູ້ບໍລິ ຫານລະດັບກະຊວງ ມະຫາວິທະຍາໄລ ທີ່ມີສ່ວນ ຮ່ວມຮັບຜິດຊອບການພັດທະນາການພັດທະນາ ມະຫາວິທະຍາໄລ ແລະ ຜູ້ທີ່ສົນໃຈ.

2) ເປັນຂໍ້ມູນ ແລະ ເປັນທາງເລືອກທີ່ສຳ ຄັນສຳລັບຜູ້ບໍລິຫານສະຖາບັນການສຶກສາຊັ້ນສູງເວົ້າ ລວມ ເວົ້າສະເພາະແມ່ນຜູ້ບໍລິຫານມະຫາວິທະຍາ ໄລ.

1.4 ກອບແນວຄວາມຄິດການວິໄຈ




ຮູບທີ 1. ກອບແນວຄວາມຄິດການວິໄຈ

2. ວິທີການ / ວິທີວິທະຍາໃນການຄົ້ນຄວ້າ

ການວິໄຈຄັ້ງນີ້ເປັນການວິໄຈທີ່ນຳ ໃຊ້ລະ ບຽບວິທີການ ແລະ ເຕັກນິກວິທີການວິໄຈອະນາຄົດ)Future Research(ມາໃຊ້ຮ່ວມກັນປະກອບ ດ້ວຍເຕັກນິກການວິໄຈແບບ Ethnographic Delphi Futures Research (EDFR), ການສ້າງ ວົງລໍ້ອະນາຄົດ (Future Wheels) ການວິເຄາະຜົນ ກະທົບໄຂ້ວລະຫວ່າງແນວໂນ້ມເຫດການຕໍ່ເນື່ອງ (Cross-impact Analysis) ແລະ ການຂຽນອະນາ ຄົດ)Scenario ຫລື Future Development(ວິ ທີການສຶກສາອະນາຄົດໃນຮູບແບບນີ້ກຳນົດເປົ້າໝ າຍຂອງອົງກອນພັນທະກິດ ແລະ ອະນາຄົດທີ່ອົງ ກອນຕ້ອງການ ໂດຍຜູ້ທີ່ມີສ່ວນກ່ຽວຂ້ອງ (Stakeholder) ເຂົ້າມາມີສ່ວນຮ່ວມໃນການໃຫ້ຂໍ້ ມູນພື້ນຖານ, ຊຶ່ງການວິໄຈນີ້ໄດ້ດຳເນີນເປັນ 3 ໄລ ຍະດັ່ງນີ້: ໄລຍະທີ 1 ສຶກສາແນວຄິດທິດສະດີການ ຄຸ້ມຄອງບໍລິຫານການສຶກສາຊັ້ນສູງ, ໄລຍະທີ 2 ສຶກ ສາອະນາຄົດຂອງມະຫາວິທະຍາໄລ ໂດຍໃຊ້ເຕັກ ນິກການວິໄຈອະນາຄົດແບບ EDFR, ໄລຍະທີ 3 ການສ້າງຮູບພາບອະນາຄົດຂອງມະຫາວິທະຍາໄລ ໃນ ສປປ. ລາວ ດັ່ງຮູບພາບທີ 1 ດັ່ງລຸ່ມນີ້.

2.1 ຂັ້ນຕອນການດຳເນີນການວິໄຈ



ຮູບທີ 2. ຂັ້ນຕອນດຳເນີນການວິໄຈທ່າອ່ຽງອະນາຄົດຂອງມະຫາວິທະຍາໄລໃນ ສປປ ລາວ ແຕ່ປີ 2016 - 2030

2.2 ປະຊາກອນ

ປະຊາກອນເປັນພະນັກງານຜູ້ບໍລິຫານ ລະດັບກະຊວງ ລະດັບກົມທີ່ກ່ຽວຂ້ອງ ຊຶ່ງເປັນຜູ້ວາງແຜນກຳນົດແຜນພັດທະນາການສຶກສາຊັ້ນສູງໃນ ລະດັບມະຫາພາກ ບຸກຄະລາກອນທີ່ເປັນຜູ້ບໍລິຫານ ລະດັບສູງຂອງມະຫາວິທະຍາໄລ ລະດັບຄະນະບໍດີ ພາກວິຊາແລະໜ່ວຍວິຊາທີ່ກ່ຽວຂ້ອງທີ່ກຳນົດແຜນ ພັດທະນາມະຫາວິທະຍາໄລ.

2.3 ກຸ່ມຕົວຢ່າງ

ໄລຍະທີ 1 ກຸ່ມຕົວຢ່າງໃນໄລຍະທີ 1 ໄດ້ແກ່ຜູ້ບໍລິຫານລະດັບມະຫາພາກຫລື ຂັ້ນກະຊວງ ທີ່ກຳນົດທິດທາງພັດທະນາການສຶກສາຊັ້ນສູງ ແລະ ຜູ້ບໍລິຫານລະດັບຄະນະອະທິການບໍດີ ມະຫາວິທະຍາໄລ ຈຳນວນ 8 ທ່ານ

ໄລຍະທີ 2 ໄດ້ແກ່ຜູ້ບໍລິຫານລະດັບ ມະຫາວິທະຍາໄລທີ່ມີໜ້າທີ່ວາງທິດທາງພັດທະນາ ມະຫາວິທະຍາໄລ ທີ່ເປັນຮອງອະທິການບໍດີຈຳນວນ 24 ທ່ານ

ໄລຍະທີ 3 ໄດ້ແກ່ຜູ້ບໍລິຫານໃນ ມະຫາວິທະຍາໄລ ທີ່ເປັນຄະນະຫ້ອງການ ຄະນະວິຊາ ຄະນະພາກວິຊາ ຄະນະພະແນກທີ່ມີໜ້າທີ່ຈັດຕັ້ງປະຕິບັດທິດທາງແຜນການ ຂອງ ມະຫາວິທະຍາໄລ ຈຳນວນ 70 ທ່ານ.

2.4 ເຄື່ອງມືທີ່ນຳໃຊ້ໃນການວິໄຈ

ການວິໄຈຄັ້ງນີ້ໄດ້ນຳໃຊ້ເຕັກນິກແບບ Ethnographic Delphi Futures Research (EDFR), ຊຶ່ງເປັນເຕັກນິກການວິໄຈອະນາຄົດ ໂດຍຜູ້ວິໄຈໄດ້ດຳເນີນການເຮັດການວິໄຈຈຳນວນ 3 ຮອບ ໃນໄລຍະທີ 2 ດັ່ງນີ້:

ຮອບທີ 1 ເປັນການສຳພາດຜູ້ຊ່ຽວຊານຈຳນວນ 24 ຄົນ ຮອບທີ 2 ແລະ ຮອບທີ 3 ເຄື່ອງມືທີ່ໃຊ້ເປັນແບບສອບຖາມມາດຕາສ່ວນປະມານຄ່າ 5 ລະດັບ.

ການເກັບລວບລວມຂໍ້ມູນ ແລະ ການວິເຄາະຂໍ້ມູນ

1) ການເກັບລວບລວມ: ຂໍ້ມູນຮອບທີ 1 ເກັບລວບລວມຂໍ້ມູນໂດຍການສຳພາດຜູ້ຊ່ຽວຊານ ຈຳນວນ 24 ຄົນ ຮອບທີ 2 ແລະ ຮອບທີ 3 ສົ່ງແບບສອບຖາມໃຫ້ຜູ້ຊ່ຽວຊານໂດຍທາງໄປສະນີ ເພື່ອໃຫ້ຖືກຕ້ອງຕາມລະບຽບການວິໄຈ.

2) ການວິເຄາະຂໍ້ມູນ: ວິເຄາະຂໍ້ມູນໂດຍການຄຳນວນຄ່າສ່ວນຮ້ອຍ, ຄ່າສະເລ່ຍ, ສ່ວນບ່ຽງເບນມາດຕະຖານ, ຖານນິຍົມ ແລະ ຄ່າພິໄສລະຫວ່າງຄວໍທາຍ ແລະ ວິເຄາະຫາຄ່າເມຕຣິກການປະມານຄ່າຄວາມໜ້າຈະເປັນໄປໄດ້ຂອງຜົນກະທົບພາບຕັດຂວາງເມຕຣິກການປະມານຄ່າແຕ້ມຕໍ່ຂອງຜົນກະທົບພາບຕັດຂວາງ ແລະ ການວິເຄາະຫາອັດຕາສ່ວນແຕ້ມຕໍ່ຂອງການເກີດຜົນກະທົບພາບຕັດຂວາງ


3. ຜົນການວິໄຈ ແລະ ການອະທິບາຍຜົນ

3.1 ຜົນການວິໄຈ

ຜົນການວິໄຈຄັ້ງນີ້ສາມາດໄດ້ທ່າອຽງອະນາຄົດຂອງມະຫາວິທະຍາໄລ 4 ແຫ່ງທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ສປປ.ລາວ ໃນ 15 ປີຕໍ່ໜ້າແຕ່ປີ 2016-2030 ທີ່ມີທ່າອຽງແລະ ໂອກາດເປັນໄປໄດ້ຫລາຍເຖິງຫລາຍທີ່ສຸດ, ຊຶ່ງປະກອບດ້ວຍອະນາຄົດໃນ 12 ດ້ານດັ່ງນີ້: ອະນາຄົດທີ 1: ດ້ານການຄຸ້ມຄອງບໍລິຫານມະຫາວິທະຍາໄລ ເຫັນວ່າມີອົງປະກອບຍ່ອຍຈຳນວນທັງໝົດ 8 ຂໍ້ ໃນນັ້ນມີທ່າອຽງແລະ ໂອກາດເປັນໄປໄດ້ຫຼາຍທີ່ສຸດ ຈຳນວນ 7 ຂໍ້ ແລະ ເປັນໄປໄດ້ຫຼາຍ 1 ຂໍ້, ອະນາຄົດທີ 2: ດ້ານຫຼັກສູດ ແລະ ການຮຽນ-ການສອນ ເຫັນວ່າມີອົງປະກອບຍ່ອຍ ຈຳນວນທັງໝົດ 10 ຂໍ້ ໃນນັ້ນມີທ່າອຽງແລະ ໂອກາດເປັນໄປໄດ້ຫຼາຍທີ່ສຸດ ຈຳນວນ 7 ຂໍ້ ແລະ ເປັນໄປໄດ້ຫຼາຍ 3 ຂໍ້, ອະນາຄົດທີ 3: ດ້ານການຄົ້ນຄວ້າວິໄຈ ເຫັນວ່າມີອົງປະກອບຍ່ອຍ ຈຳນວນທັງໝົດ 7 ຂໍ້ ໃນນັ້ນມີທ່າອຽງແລະ ໂອກາດເປັນໄປໄດ້ຫຼາຍທີ່ສຸດ ຈຳນວນ 6 ຂໍ້ ແລະ ເປັນໄປໄດ້ຫຼາຍ 1 ຂໍ້, ອະນາຄົດທີ 4: ດ້ານການບໍລິການວິຊາການ ເຫັນວ່າມີອົງປະກອບຍ່ອຍ ຈຳນວນທັງໝົດ 10 ຂໍ້ ໃນນັ້ນມີທ່າອຽງແລະ ໂອກາດເປັນໄປໄດ້ຫຼາຍທີ່ສຸດ ຈຳນວນ 7 ຂໍ້ ແລະ ເປັນໄປໄດ້ຫຼາຍ 3 ຂໍ້, ອະນາຄົດທີ 5: ດ້ານການອະນຸຮັກວັດທະນະທຳ ເຫັນວ່າມີອົງປະກອບຍ່ອຍ ຈຳນວນທັງໝົດ 6 ຂໍ້ ໃນນັ້ນມີທ່າອຽງແລະ ໂອກາດເປັນໄປໄດ້ຫຼາຍທີ່ສຸດທຸກຂໍ້, ອະນາຄົດທີ 6: ດ້ານບົດບາດຂອງມະຫາວິທະຍາໄລຕໍ່ຊຸມຊົນ ເຫັນວ່າມີອົງປະກອບຍ່ອຍ ຈຳນວນທັງໝົດ 9 ຂໍ້ ໃນນັ້ນມີທ່າອຽງແລະ ໂອກາດເປັນໄປໄດ້ຫຼາຍທີ່ສຸດ ຈຳນວນ 7 ຂໍ້ ແລະ ເປັນໄປໄດ້ຫຼາຍ 2 ຂໍ້, ອະນາຄົດທີ 7: ດ້ານການຮ່ວມມືກັບພາຍໃນ ແລະ ຕ່າງປະເທດ ເຫັນວ່າມີອົງປະກອບຍ່ອຍ ຈຳນວນທັງໝົດ 9 ຂໍ້ ໃນນັ້ນມີທ່າອຽງແລະ ໂອກາດເປັນໄປໄດ້ຫຼາຍທີ່ສຸດ ຈຳນວນ 8 ຂໍ້ ແລະ ເປັນໄປໄດ້ຫຼາຍ 1 ຂໍ້, ອະນາຄົດທີ 8: ດ້ານພື້ນຖານໂຄງລ່າງ/ສິ່ງອຳນວຍຄວາມສະດວກ ເຫັນວ່າມີອົງປະກອບຍ່ອຍ ຈຳນວນທັງໝົດ 8 ຂໍ້ ໃນນັ້ນມີທ່າອຽງແລະ ໂອກາດເປັນໄປໄດ້ຫຼາຍທີ່ສຸດ ຈຳນວນ 3 ຂໍ້ ແລະ ເປັນໄປໄດ້ຫຼາຍ 5 ຂໍ້, ອະນາຄົດທີ 9: ດ້ານຄວາມເປັນອັດຕະລັກ(ຄວາມໂດດເດັ່ນ) ຂອງມະຫາວິທະຍາໄລ ເຫັນວ່າມີອົງປະກອບຍ່ອຍ ຈຳນວນທັງໝົດ 5 ຂໍ້ ໃນນັ້ນມີທ່າອຽງແລະ ໂອກາດເປັນໄປໄດ້ຫຼາຍທີ່ສຸດ ຈຳນວນ 3 ຂໍ້ ແລະ ເປັນໄປໄດ້ຫຼາຍ 2 ຂໍ້, ອະນາຄົດທີ 10: ດ້ານຜູ້ຮຽນ ເຫັນວ່າມີອົງປະກອບຍ່ອຍ ຈຳນວນທັງໝົດ 8 ຂໍ້ ໃນນັ້ນມີທ່າອຽງແລະ ໂອກາດເປັນໄປໄດ້ຫຼາຍທີ່ສຸດ ຈຳນວນ 7 ຂໍ້ ແລະ ເປັນໄປໄດ້ຫຼາຍ 1 ຂໍ້, ອະນາຄົດທີ 11: ດ້ານອາຈານສອນ ເຫັນວ່າມີອົງປະກອບຍ່ອຍ ຈຳນວນທັງໝົດ 14 ຂໍ້ ໃນນັ້ນມີທ່າອຽງແລະ ໂອກາດເປັນໄປໄດ້ຫຼາຍທີ່ສຸດທຸກຂໍ້, ອະນາຄົດທີ 12: ດ້ານຜູ້ບໍລິຫານ ເຫັນວ່າມີອົງປະກອບຍ່ອຍ ຈຳນວນທັງໝົດ 9 ຂໍ້ ໃນນັ້ນມີທ່າອຽງແລະ ໂອກາດເປັນໄປໄດ້ຫຼາຍທີ່ສຸດທຸກຂໍ້.

3.2 ການສ້າງວົງລໍ້ອະນາຄົດ

ຜູ້ວິໄຈໄດ້ມາສ້າງຮູບວົງລໍ້ທ່າອຽງອະນາຄົດ ຈາກ 12 ດ້ານຂອງອະນາຄົດ ແລະອົງປະກອບຍ່ອຍຈຳນວນ 84 ຂໍ້ ທີ່ມີທ່າອຽງແລະ ໂອກາດທີ່ເປັນໄປໄດ້ຫຼາຍທີ່ສຸດເທົ່ານັ້ນ ດັ່ງພາບທີ 3.




ຮູບທີ 3. ຮູບພາບວິງລໍ້ທ່າອຽງອະນາຄົດຂອງມະຫາວິທະຍາໄລ ໃນ ສປປ.ລາວ ລະຫວ່າງ 2016-2030

ຕາມຜົນການວິໄຈຂອງການວິເຄາະຜົນກະທົບພາບຕັດຂວາງ ແລະ ເມື່ອພິຈາລະນາການພັດທະນາ ມະຫາວິທະຍາໄລຂອງ ສປປ ລາວ ທັງ 12 ດ້ານ ພົບວ່າ: ການພັດທະນາຜູ້ບໍລິຫານ (E12) ມີໂອກາດເປັນໄປໄດ້ຫຼາຍທີ່ສຸດອັນດັບໜຶ່ງ (14.52) ແລະ ເມື່ອມີການພັດທະນາດ້ານຜູ້ບໍລິຫານແລ້ວ ຈະເຮັດໃຫ້ມີການພັດທະນາດ້ານບົດບາດຂອງມະຫາວິທະຍາໄລຕໍ່ຊຸມຊົນ (E6) ດ້ານຄວາມເປັນເອກະລັກ (ໂດດເດັ່ນ) ຂອງມະຫາວິທະຍາໄລ (E9) ແລະ ດ້ານການບໍລິການວິຊາການ (E4) ຕາມລຳດັບ (1.12, 1.10 ແລະ 1.02 ຕາມລຳດັບ)

ການພັດທະນາດ້ານຫຼັກສູດ ແລະ ການຮຽນ-ການສອນ (E2) ເປັນດ້ານທີ່ມີໂອກາດເປັນໄປໄດ້ຫຼາຍທີ່ສຸດອັນດັບຮອງລົງມາ (13.97) ແລະ ເມື່ອມີການພັດທະນາດ້ານຫຼັກສູດ ແລະ ການຮຽນ-ການສອນແລ້ວ ຈະເຮັດໃຫ້ມີການພັດທະນາດ້ານຜູ້ຮຽນ (E10) ດ້ານການບໍລິການວິຊານ (E4) ດ້ານຄວາມເປັນເອກະລັກ (ໂດດເດັ່ນ) ຂອງມະຫາວິທະຍາໄລ (E9) ແລະ ດ້ານອາຈານສອນ (E11) ຕາມລຳດັບ.

ການພັດທະນາດ້ານການຄົ້ນຄວ້າວິໄຈ (E3) ເປັນດ້ານທີ່ມີໂອກາດເປັນໄປໄດ້ຫຼາຍທີ່ສຸດອັນດັບສາມ (12.54) ແລະ ເມື່ອມີການພັດທະນາການຄົ້ນຄວ້າວິໄຈແລ້ວຈະເຮັດໃຫ້ມີການພັດທະນາດ້ານການບໍລິການວິຊາການ (E4) ດ້ານຄວາມເປັນເອກະລັກ (ໂດດເດັ່ນ) ຂອງມະຫາວິທະຍາໄລ (E9) ແລະ ດ້ານຜູ້ຮຽນ (E10) ຕາມລຳດັບ (1.50, 1.10 ແລະ 1.04 ຕາມລຳດັບ)

ການພັດທະນາດ້ານອາຈານສອນ (E11) ເປັນດ້ານທີ່ມີໂອກາດເປັນໄປໄດ້ຫຼາຍທີ່ສຸດອັນດັບສີ່ (12.50) ແລະ ເມື່ອມີການພັດທະນາດ້ານອາຈານແລ້ວຈະເຮັດໃຫ້ເກີດການພັດທະນາດ້ານການບໍລິການວິຊາການ (E4) ແລະ ດ້ານຜູ້ຮຽນ (E10) ຕາມລຳດັບ (1.14 ແລະ 1.04 ຕາມລຳດັບ) ສ່ວນດ້ານອື່ນໆທີ່ເຫຼືອກໍ່ສົ່ງຜົນໃຫ້ເກີດການພັດທະນາເຊິ່ງກັນແລະກັນຊຶ່ງສະແດງອອກຢູ່ຮູບພາບທີ 3 ດັ່ງລຸ່ມນີ້.



ຮູບທີ 4. ການພັດທະນາດ້ານຕ່າງໆ ຂອງມະຫາວິທະຍາໄລ ໃນ ສປປ ລາວ

4. ວິພາກຜົນ / ອະທິບາຍຜົນການວິໄຈ

1) ທ່າອຽງອະນາຄົດດ້ານການຄຸ້ມຄອງມະຫາວິທະຍາໄລ ໃນ ສປປ ລາວ ລະຫວ່າງ ປີ 2016-2030 ຜົນການວິໄຈພົບວ່າ ດ້ານການ ຄຸ້ມຄອງມະຫາວິທະຍາໄລ ໃນອະນາຄົດມີໂອກາດເປັນໄປໄດ້ໃນລະດັບຫຼາຍທີ່ສຸດ ແລະ ເປັນອະນາຄົດທີ່ສາມາດນຳໄປພັດທະນາໄດ້ ຊຶ່ງສອດຄ່ອງກັບ ກະຊວງສຶກສາທິການ ແລະ ກິລາ (2015), ແຜນຍຸທະສາດການປະຕິຮູບການສຶກສາແຫ່ງຊາດ 2006-2015, ແຜນແມ່ບົດຂອງກົມການສຶກສາຊັ້ນສູງແຕ່ປີ 2016-2020, ແຜນພັດທະນາການສຶກສາ ແລະ ກິລາ 5 ປີຄັ້ງທີ 8, ນາຍົກລັດຖະມົນຕແຫ່ງ ສປປ ລາວ (2015), ດຳລັດວ່າດ້ວຍການສຶກສາຊັ້ນສູງ ເລກທີ 177/ລບ (2015), ເອກະສານກອງປະຊຸມວຽກງານແນວຄິດທົ່ວປະເທດຄັ້ງທີ 3, ພະມະຫາສາຄອນ ພັກດີນອກ (ພສ. 2544) ການປ່ຽນແປງຂອງອົງກອນ.

2) ທ່າອຽງອະນາຄົດດ້ານຫຼັກສູດ ແລະ ການຮຽນ-ການສອນຂອງມະຫາວິທະຍາໄລ ໃນ ສປປ ລາວ ລະຫວ່າງ ປີ 2016-2030 ຜົນການວິໄຈພົບວ່າ ດ້ານຫຼັກສູດ ແລະ ການຮຽນ-ການສອນໃນອະນາຄົດ ມີໂອກາດເປັນໄປໄດ້ໃນລະດັບຫຼາຍທີ່ສຸດ ແລະ ເປັນອະນາຄົດທີ່ສາມາດນຳໄປພັດທະນາໄດ້ ຊຶ່ງສອດຄ່ອງກັບ ແຜນພັດທະນາການສຶກສາ ແລະ ກິລາ 5 ປີຄັ້ງທີ 8 ແຕ່ປີ 2016-2030 ຂອງກະຊວງສຶກສາທິການ ແລະ ກິລາ, ດຳລັດວ່າດ້ວຍການສຶກສາຊັ້ນສູງເລກທີ 177/ລບ (2015), ແຜນຍຸດທະສາດການພັດທະນາເສດຖະກິດ-ສັງຄົມ, ລັດດາ ວັນ ເພັຊ ໂຣດ)ພສ.2538 ,(ການສຶກສາອະນາຄົດຄຸນນະພາບຂອງມະຫາວິທະຍາໄລຮາມຄຳແຫງ ໂດຍວິທີການຄົ້ນຄວ້າໃນທາງທຳມະຊາດ ,ຊົມພູນຸດ ຮ່ວມຊາດ)ພສ.2548ຂອງຫຼັກຄິດນາອະ (ສູດວິຊາຊີບຄູໃນທິດສະວັດໜ້າ (ພສ.2550-2559) ຈຸຣິຣັດ ສືບຕະກູນ (ພສ.2539) ແນວໂນ້ມຫຼັກສູດ ແລະ ການສອນລະດັບປະລິນຍາໂທ ສາຂາເຕັກໂນໂລຊີການສຶກສາ ມະຫາວິທະຍາໄລກະເສດສາດ ໃນທິດສະວັດໜ້າ (ພສ.2538-2548).

3) ທ່າອຽງອະນາຄົດ ດ້ານການຄົ້ນຄວ້າວິໄຈ ຂອງມະຫາວິທະຍາໄລ ໃນ ສປປ.ລາວ ລະຫວ່າງ ປີ 2016-2030 ຜົນການວິໄຈພົບວ່າ ດ້ານການຄົ້ນຄວ້າວິໄຈ ໃນອະນາຄົດ ມີໂອກາດເປັນໄປໄດ້ໃນລະ

ດັບຫຼາຍທີ່ສຸດ ແລະ ເປັນອະນາຄົດທີ່ສາມາດນຳໄປພັດທະນາໄດ້ ຊຶ່ງສອດຄ່ອງກັບ ແຜນພັດທະນາການສຶກສາ ແລະ ກິລາ 5 ປີຄັ້ງທີ 8 ແຕ່ປີ 2016-2020 ຂອງກະຊວງສຶກສາທິການ ແລະ ກິລາ, ດຳລັດວ່າ ດ້ວຍການສຶກສາຊັ້ນສູງ ເລກທີ 177/ລບ (2015), ບຸນຊົມ ສີສະອາດ (ພສ.2554) ການວິໄຈກ່ຽວກັບ ການບໍລິຫານການສຶກສາ, ບຸນຊົມ ສີສະອາດ (ພສ. 2556) ການວິໄຈເບື້ອງຕົ້ນສະບັບປັບປຸງໃໝ່, ສຸດາ ວະດີ ລີ້ມໄພບູນ (ພສ.2555) ອະນາຄົດສາດ ແລະ ການວິໄຈອະນາຄົດ.

4) ທ່າອຽງອະນາຄົດ ດ້ານການບໍລິການວິຊາການຂອງມະຫາວິທະຍາໄລ ໃນ ສປປ ລາວ ລະຫວ່າງ ປີ 2016-2030 ຜົນການວິໄຈພົບວ່າ ດ້ານການບໍລິການວິຊາການໃນອະນາຄົດ ມີໂອກາດເປັນໄປໄດ້ໃນລະດັບຫຼາຍທີ່ສຸດ ແລະ ເປັນອະນາຄົດທີ່ສາມາດນຳໄປພັດທະນາໄດ້ ຊຶ່ງສອດຄ່ອງກັບ ແຜນພັດທະນາການສຶກສາ ແລະ ກິລາ 5 ປີຄັ້ງທີ 8 ແຕ່ປີ 2016-2020 ຂອງກະຊວງສຶກສາທິການ ແລະ ກິລາ, ດຳລັດວ່າດ້ວຍການສຶກສາຊັ້ນສູງ ເລກທີ 177/ລບ (2015), ຈັນທາ ພອນມານີ (ພສ.2546) ປະຕິຮູບການສຶກສາ ການກຽມຄວາມພ້ອມຂອງຄູ ແລະ ຜູ້ບໍລິຫານມືອາຊີບ, ປັດຊະຍາ ເວສາຣັດ (ພສ.2545) ການພັດທະນາບຸກຄະລາກອນດ້ານການວິໄຈໃນຫ້ອງຮຽນສຸວັນນະພູມພິທະຍາ.

5) ທ່າອຽງອະນາຄົດ ດ້ານການອານຸຮັກວັດທະນະທຳຂອງມະຫາວິທະຍາໄລ ໃນ ສປປ ລາວ ລະຫວ່າງ ປີ 2016-2030 ຜົນການວິໄຈພົບວ່າ ດ້ານການອານຸຮັກວັດທະນະທຳໃນອະນາຄົດ ມີໂອກາດເປັນໄປໄດ້ໃນລະດັບຫຼາຍທີ່ສຸດ ແລະ ເປັນອະນາຄົດທີ່ສາມາດນຳໄປພັດທະນາໄດ້ ຊຶ່ງສອດຄ່ອງກັບ ແຜນພັດທະນາການສຶກສາ ແລະ ກິລາ 5 ປີຄັ້ງທີ 8 ແຕ່ປີ 2016-2030 ຂອງກະຊວງສຶກສາທິການ ແລະ ກິລາ, ດຳລັດວ່າດ້ວຍການສຶກສາຊັ້ນສູງ ສປປ. ລາວ ເລກທີ 177/ລບ (2015), ຖະໜອມວອນ ປະເສີດຈະເລີນສຸກ (ພສ.2549), ອະນາຄົດຄວາມເປັນມະຫາວິທະຍາໄລຂອງມະຫາວິທະຍາໄລຂອນແກ່ນ, ແຜນຍຸດທະສາດການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ 2011-2020 ແລະ ເອກະສານກອງປະຊຸມໃຫຍ່ຄັ້ງທີ 9.

6) ທ່າອຽງອະນາຄົດ ດ້ານບົດບາດຂອງມະຫາວິທະຍາໄລຕໍ່ຊຸມຊົນ ໃນ ສປປ ລາວ ລະຫວ່າງ ປີ 2016-2030 ຜົນການວິໄຈພົບວ່າ ດ້ານບົດບາດຂອງມະຫາວິທະຍາໄລຕໍ່ຊຸມຊົນ ໃນອະນາຄົດ ມີໂອກາດເປັນໄປໄດ້ໃນລະດັບຫຼາຍທີ່ສຸດ ແລະ ເປັນອະນາຄົດທີ່ສາມາດນຳໄປພັດທະນາໄດ້ ຊຶ່ງສອດຄ່ອງກັບ ແຜນພັດທະນາການສຶກສາ ແລະ ກິລາ 5 ປີຄັ້ງທີ 8 ແຕ່ປີ 2016-2020 ຂອງກະຊວງສຶກສາທິການ ແລະ ກິລາ, ດຳລັດວ່າດ້ວຍການສຶກສາຊັ້ນສູງ ສປປ. ລາວ ເລກທີ 177/ລບ (2015), ສັກດີ ພັນ ຕັນວິມົນຣັດ) ພສ. 2542) ຂໍ້ສະເໜີແນວທາງ ແຜນກົນລະຍຸດມະຫາວິທະຍາໄລສີລະປະກອນ ໃນ ແຜນພັດທະນາ, ປອງພົນ ອະດີເຣກສານ (ພສ. 2546) ການປະຕິຮູບລະບົບການສຶກສາ.

7) ທ່າອຽງອະນາຄົດ ດ້ານການຮ່ວມມືພາຍໃນ ແລະ ຕ່າງປະເທດຂອງມະຫາວິທະຍາໄລ ໃນ ສປປ ລາວ ລະຫວ່າງ ປີ 2016-2030 ຜົນການວິໄຈພົບວ່າ ດ້ານການຮ່ວມມືພາຍໃນ ແລະ ຕ່າງປະເທດຂອງມະຫາວິທະຍາໄລ ໃນອະນາຄົດ ມີໂອກາດເປັນໄປໄດ້ໃນລະດັບຫຼາຍທີ່ສຸດ ແລະ ເປັນອະນາຄົດທີ່ສາມາດນຳໄປພັດທະນາໄດ້ ຊຶ່ງສອດຄ່ອງກັບແຜນພັດທະນາການສຶກສາ ແລະ ກິລາ 5 ປີຄັ້ງທີ 8 ແຕ່ປີ 2016-2020 ຂອງກະຊວງສຶກສາທິການ ແລະ ກິລາ, ດຳລັດວ່າດ້ວຍການສຶກສາຊັ້ນສູງ ເລກທີ 177/ລບ (2015), ໄກສອນ ພົມວິຫານ (1983) ບົດຄຳເຫັນຕໍ່ກອງປະຊຸມໃຫຍ່ຄັ້ງທີ 4 ຂອງພັກປະຊາຊົນປະຕິວັດລາວ (1991) ແລະບົດຄຳເຫັນຕໍ່ກອງປະຊຸມໃຫຍ່ຄັ້ງທີ 6 ຂອງພັກປະຊາຊົນປະຕິວັດລາວ, ຄຳໄຕ ສີພັນດອນ (1996) ບົດຄຳເຫັນຕໍ່ກອງປະຊຸມໃຫຍ່ຄັ້ງທີ 7 ຂອງພັກປະຊາຊົນປະຕິວັດລາວ, ພະມະຫາສາຄອນ ພັກດີນອກ (ພສ.2555) ທິດທາງຂອງມະຫາວິທະຍາໄລມະຫາມະກຸດຣາຊະວິທະຍາໄລໃນທົດສະວັດໜ້າ (ພສ. 2555-2564), ລັດດາ ວັນ ເພັຊໂຣດ (ພສ.2538) ການສຶກສາອະນາຄົດ

ຂອງຄຸນນະພາບຂອງມະຫາວິທະຍາໄລຮາມຄຳແຫງ ໂດຍວິທີການຄົ້ນຄວ້າໃນທາງທຳມະຊາດ.

8) ທ່າອຽງອະນາຄົດດ້ານພື້ນຖານໂຄງລ່າງ/ສິ່ງອຳນວຍຄວາມສະດວກຂອງມະຫາວິທະຍາໄລໃນ ສປປລາວ ລະຫວ່າງ 2016-2030 ຜົນການວິໄຈພົບວ່າ ດ້ານພື້ນຖານໂຄງລ່າງ/ສິ່ງອຳນວຍຄວາມສະດວກໃນອະນາຄົດມີໂອກາດເປັນໄປໄດ້ໃນລະດັບຫຼາຍທີ່ສຸດ ແລະ ເປັນອະນາຄົດທີ່ສາມາດນຳໄປພັດທະນາໄດ້ ຊຶ່ງສອດຄ່ອງກັບ ແຜນພັດທະນາການສຶກສາ ແລະ ກິລາ 5 ປີ ຄັ້ງທີ 8 ແຕ່ປີ 2016-2020, ດຳລັດວ່າດ້ວຍການສຶກສາຊັ້ນສູງ ເລກທີ 177/ລບ (2015), ທິຣະ ຣຸນຈະເຣີນ (ພສ.2550) ການບໍລິຫານໂຮງຮຽນ ຍຸກປະຕິຮູບການສຶກສາ (ພສ. 2548)

9) ທ່າອຽງອະນາຄົດ ດ້ານຄວາມເປັນເອກະລັກ (ຄວາມໂດດເດັ່ນ) ຂອງມະຫາວິທະຍາໄລ ໃນ ສປປ ລາວ ລະຫວ່າງປີ2016-2030 ຜົນການວິໄຈພົບວ່າ ດ້ານຄວາມເປັນເອກະລັກ(ຄວາມໂດດເດັ່ນ) ຂອງມະຫາວິທະຍາໄລໃນອະນາຄົດມີໂອກາດເປັນໄປໄດ້ໃນລະດັບຫຼາຍທີ່ສຸດ ແລະ ເປັນອະນາຄົດທີ່ສາມາດນຳໄປພັດທະນາໄດ້ ຊຶ່ງສອດຄ່ອງກັບ ແຜນພັດທະນາການສຶກສາ ແລະ ກິລາ 5 ປີ ຄັ້ງທີ 8 ແຕ່ປີ 2016-2020, ດຳລັດວ່າດ້ວຍການສຶກສາຊັ້ນສູງ ເລກທີ 177/ລບ (2015), ທົ່ງໄຊ ສັນຕິວົງ (ພສ.2540) ອົງການ ແລະ ການຈັດການສຶກສາທັນສະໄໝ ຍຸກໂລກາພິວັດ, ຈັນທາ ພອນມະມານີ (ພສ. 2546)ປະຕິຮູບການສຶກສາການກຽມຄວາມພ້ອມຂອງຄູ ແລະ ຜູ້ບໍລິຫານມືອາຊີບ.

10) ທ່າອຽງອະນາຄົດ ດ້ານຜູ້ຮຽນໃນມະຫາວິທະຍາໄລ ໃນ ສປປ ລາວ ລະຫວ່າງ 2016-2030 ຜົນການວິໄຈພົບວ່າ ດ້ານຜູ້ຮຽນໃນອະນາຄົດມີໂອກາດເປັນໄປໄດ້ໃນລະດັບຫຼາຍທີ່ສຸດ ແລະ ເປັນອະນາຄົດທີ່ສາມາດນຳໄປພັດທະນາໄດ້ ຊຶ່ງສອດຄ່ອງກັບ ແຜນພັດທະນາການສຶກສາ ແລະ ກິລາ 5 ປີ ຄັ້ງທີ 8 ແຕ່ປີ 2016-2020, ດຳລັດວ່າດ້ວຍການສຶກສາຊັ້ນສູງ ເລກທີ 177/ລບ (2015), ແຜນຍຸດທະສາດການປະຕິຮູບການສຶກສາແຫ່ງຊາດ 2006-2015 ຂອງກະຊວງສຶກສາທິການ, ບົດລາຍງານກ່ຽວກັບ ແຜນປະຕິຮູບການສຶກສາຊັ້ນສູງຕໍ່ກອງປະຊຸມຄົບຄະນະຄັ້ງທີ 7 (2012), ຈຸຣິຣັດ ສີບຕະກຸນ (ພສ. 2541), ແນວໂນ້ມຫຼັກສູດການສອນລະດັບປະລິນຍາໂທສາຂາເຕັກໂນໂລຢີການສຶກສາ ມະຫາວິທະຍາໄລກະເສດສາດໃນທົດສະວັດໜ້າ.

11. ທ່າອຽງອະນາຄົດ ດ້ານອາຈານສອນມະຫາວິທະຍາໄລ ໃນ ສປປ ລາວ ລະຫວ່າງ 2016-2030 ຜົນການວິໄຈພົບວ່າ ດ້ານອາຈານ ໃນອະນາຄົດມີໂອກາດເປັນໄປໄດ້ໃນລະດັບຫຼາຍທີ່ສຸດ ແລະ ເປັນອະນາຄົດທີ່ສາມາດນຳໄປພັດທະນາໄດ້ ຊຶ່ງສອດຄ່ອງກັບ ແຜນພັດທະນາການສຶກສາ ແລະ ກິລາ 5 ປີ ຄັ້ງທີ 8 ແຕ່ປີ 2016-2020, ດຳລັດວ່າດ້ວຍການສຶກສາຊັ້ນສູງ ເລກທີ 177/ລບ (2015), ຊົມພູນຸດ ຣ່ວມຊາດ (ພສ.2548) ອະນາຄົດຂອງຫຼັກສູດວິຊາຊີບຄູໃນທົດສະວັດໜ້າ (ພສ. 2550-2559), ຈັນທາ ພອນມະມານີ)ພສ.2546) ປະຕິຮູບການສຶກສາການກຽມຄວາມພ້ອມຂອງຄູ ແລະ ຜູ້ບໍລິຫານມືອາຊີບ, ນັດຖະພັນ ຂະເຈນັນ (ພສ. 2545) ກົນລະຍຸດການປ່ຽນແປງ ແລະພັດທະນາ, ອົງກອນ ນະລິນ ສອນພິມ (ພສ.2548) ຮັບມືກັບການປ່ຽນແປງ: Productivity World.

12. ທ່າອຽງອະນາຄົດດ້ານຜູ້ບໍລິຫານ ຂອງມະຫາວິທະຍາໄລ ໃນ ສປປ ລາວ ລະຫວ່າງ 2016-2030 ຜົນການວິໄຈພົບວ່າ ດ້ານຜູ້ບໍລິຫານ ໃນອະນາຄົດມີໂອກາດເປັນໄປໄດ້ໃນລະດັບຫຼາຍທີ່ສຸດ ແລະ ເປັນອະນາຄົດທີ່ສາມາດນຳໄປພັດທະນາໄດ້ ຊຶ່ງສອດຄ່ອງກັບ ແຜນພັດທະນາການສຶກສາ ແລະ ກິລາ 5 ປີ ຄັ້ງທີ 8 ແຕ່ປີ 2016-2020, ດຳລັດວ່າດ້ວຍການສຶກສາຊັ້ນສູງ ເລກທີ 177/ລບ (2015), ຊົມພູນຸດ ຣ່ວມຊາດ (ພສ.2548) ອະນາຄົດຂອງຫຼັກສູດວິຊາຊີບຄູໃນທົດສະວັດໜ້າ (ພສ. 2550-2559), ຈັນທາ ພົມມານີ)ພສ.2546) ປະຕິຮູບການສຶກສາການກຽມຄວາມພ້ອມຂອງຄູ ແລະ ຜູ້ບໍລິຫານມືອາຊີບ, ນັດຖະພັນ ຂະເຈນນັນ (ພສ. 2545)ກົນລະຍຸດການປ່ຽນແປງ ແລະ ພັດທະນາ,

ອົງກອນ ນະລິນ ສອນພິມ (ພສ.2548) ຮັບມືກັບການປ່ຽນແປງ: Productivity World.

5. ສະຫຼຸບ

ຈາກຜົນວິໄຈຄັ້ງນີ້ສະຫຼຸບໄດ້ວ່າ ທ່າອຽງອະນາຄົດຂອງມະຫາວິທະຍາໄລ ໃນສປປ ລາວ ລະຫວ່າງ 2016-2030 ຫລືໃນ 15 ປີຕໍ່ໜ້າ ປະກອບດ້ວຍ 12 ດ້ານ ແລະ ມີຂໍ້ຍ່ອຍຈຳນວນ 84 ຂໍ້ທີ່ມີທ່າອຽງແລະ ໂອກາດເປັນໄປໄດ້ຫຼາຍທີ່ສຸດໃນການພັດທະນາ.ສ່ວນດ້ານທີ່ຈະຕ້ອງຈັດບູລິມະສິດໃຫ້ມີການພັດທະນາກ່ອນໝູ່ ແມ່ນດ້ານທີ 12-ດ້ານຜູ້ບໍລິຫານປະກອບມີ 9 ຂໍ້ຍ່ອຍ ທີ່ຄວນຈັດເປັນບູລິມະສິດໃນການພັດທະນາກ່ອນໝູ່ຄື:

1)ໃນອະນາຄົດຜູ້ບໍລິຫານລະດັບສູງຂອງມະຫາວິທະຍາໄລຈະຕ້ອງປະຕິບັດໜ້າທີ່ຄຸ້ມຄອງບໍລິຫານມະຫາວິທະຍາໄລຕາມການມອບໝາຍຂອງກະຊວງສຶກສາທິການແລະກິລາ.

2) ໃນອະນາຄົດຜູ້ບໍລິຫານທຸກລະດັບຂອງມະຫາວິທະຍາໄລຈະຕ້ອງມີຄວາມຮັບຜິດຊອບຕໍ່ຜົນສຳເລັດຕໍ່ ຈຸດດີ ຈຸດອ່ອນ ຂໍ້ຄົງຄ້າງ ໃນການປະຕິບັດພັນທະກິດໃນຂອບຍຸດທະສາດຂອງມະຫາວິທະຍາໄລ ຂອງສາຍການສຶກສາຊັ້ນສູງ ແລະ ຂອງຂະແໜງສຶກສາທິການ ແລະ ກິລາ, ມີຈັນຍາບັນ , ມີຄວາມສາມາດ ດ້ານການຄຸ້ມຄອງບໍລິຫານ ດ້ານວິຊາສະເພາະ ແລະ ມີວິໄສທັດກວ້າງໄກ.

3)ໃນອະນາຄົດກ່ຽວກັບການແຕ່ງຕັ້ງຕຳແໜ່ງຜູ້ບໍລິຫານທຸກລະດັບຂອງມະຫາວິທະຍາໄລຈະຕ້ອງສືບຕໍ່ ພິຈາລະນາຄັດເລືອກເອົາຜູ້ທີ່ເໝາະສົມ.

4)ໃນອະນາຄົດຜູ້ບໍລິຫານທຸກລະດັບຂອງມະຫາວິທະຍາໄລຈະຕ້ອງມີພາວະຜູ້ນຳ ດ້ານການຄຸ້ມຄອງບໍລິຫານສາຍການສຶກສາຊັ້ນສູງ.

5)ໃນອະນາຄົດຜູ້ບໍລິຫານທຸກລະດັບຂອງມະຫາວິທະຍາໄລ ຈະຕ້ອງສາມາດສ້າງມະຫາວິທະຍາໄລ ໃຫ້ເປັນແຫລ່ງຮຽນຮູ້ທີ່ມີຫລາຍສາຂາວິຊາ ສ້າງຕົນເອງໃຫ້ມີວິຊາການ ເກັ່ງໃນສາຂາວິຊາສະເພາະໃດໜຶ່ງ ແລະ ເກັ່ງດ້ານການຄຸ້ມຄອງບໍລິຫານການສຶກສາຊັ້ນສູງ.

6) ໃນອະນາຄົດຜູ້ບໍລິຫານທຸກລະດັບຂອງມະຫາວິທະຍາໄລຈະຕ້ອງເກັ່ງດ້ານການວາງແຜນ ການງົບປະມານ ແລະ ການເງິນ.

7)ໃນອະນາຄົດຜູ້ບໍລິຫານທຸກລະດັບຂອງມະຫາວິທະຍາໄລຈະຕ້ອງເກັ່ງດ້ານການບໍລິຫານຮອບດ້ານ ໃນມະຫາວິທະຍາໄລ ເນັ້ນໜັກດ້ານການຮ່ວມມືພາຍໃນ ແລະ ຕ່າງປະເທດ.

8)ໃນອະນາຄົດຜູ້ບໍລິຫານທຸກລະດັບຂອງມະຫາວິທະຍາໄລຈະຕ້ອງເກັ່ງພາສາຕ່າງປະເທດເນັ້ນໜັກພາສາອັງກິດ ເກັ່ງດ້ານການຄົ້ນຄວ້າວິໄຈ ແລະ ເກັ່ງດ້ານການບໍລິການວິຊາການ.

9) ໃນອະນາຄົດຜູ້ບໍລິຫານທຸກລະດັບຂອງມະຫາວິທະຍາໄລຈະຕ້ອງເກັ່ງດ້ານການປົກປັກຮັກສາ ແລະ ອະນຸລັກວັດທະນະທຳຂອງຊາດ.

ອັນດັບສອງແມ່ນດ້ານທີ 11 - ດ້ານອາຈານສອນ ປະກອບມີ 14 ຂໍ້ຍ່ອຍ, ອັນດັບສາມແມ່ນດ້ານທີ 5-ດ້ານ

ການອະນຸຮັກວັດທະນະທຳ ປະກອບດ້ວຍ 6 ຂໍ້ຍ່ອຍ. ຈາກນັ້ນ,ຈຶ່ງພິຈາລະນາພັດທະນາດ້ານອື່ນທີ່ຍັງເຫລືອ ອາດຈະພັດທະນາຄູ່ຂະໜານກັນໄປ ຫລື ຈັດເປັນລຳດັບຕາມຄວາມເໝາະສົມຕໍ່ໄປ.

6. ຂໍ້ສະເໜີ / ແນະນຳ

-ສະເໜີພາກສ່ວນອ້ອມສຳນັກກະຊວງສຶກສາທິການ ແລະ ກິລາ (ກົມການສຶກສາຊັ້ນສູງ, ກົມແຜນການ, ກົມຈັດຕັ້ງ ແລະ ພະນັກງານ, ກົມການເງິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນລະດັບມະຫາພາກ, ພິຈາລະນານຳໃຊ້ຜົນການວິໄຈກ່ຽວກັບທ່າອຽງອະນາຄົດຂອງມະຫາວິທະຍາໄລ ໃນ ສປປ ລາວ ລະຫວ່າງ ປີ 2016-2030 ເຂົ້າໃນການພັດທະນາຂະແໜງການສຶກສາຊັ້ນສູງຕາມຄວາມເໝາະສົມ.

-ສະເໜີອະທິການບໍດີ, ຄະນະບໍດີ, ຄະນະພາກວິຊາ ແລະ ຜູ້ມີສ່ວນຮ່ວມ, ພິຈາລະນານຳໃຊ້ຜົນການວິໄຈກ່ຽວກັບທ່າອຽງອະນາຄົດຂອງມະຫາວິທະຍາໄລ ໃນ ສປປ ລາວ ລະຫວ່າງ ປີ 2016-2030 ໃນການຈັດຕັ້ງປະຕິບັດ ແລະ ພັດທະນາມະຫາວິທະຍາໄລຕາມຄວາມເໝາະສົມ.

7. ເອກະສານອ້າງອີງ

ກະຊວງສຶກສາທິການ ແລະ ກິລາ. (2012). ປຶດສະຫຼຸບກອງປະຊຸມສະໄໝວິສາມັນຄະນະກຳມະການແຫ່ງຊາດກ່ຽວກັບການປະຕິຮູບລະບົບການສຶກສາແຫ່ງຊາດ.

(2015). ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII (2016-2020).

ການວິເຄາະຂໍ້ມູນທາງສະຖິຕິ: https://netra.lpru.ac.th/~phaitoon/Copy%20of% 20111RES52/8stat1.htm October 10, 2015.

ແຜນງານໃຫຍ່ຂອງກະຊວງສຶກສາທິການ ແລະ ກິລາ: 2006-2010 ແລະ 2011-2015 (ແຜນງານຂະຫຍາຍໂອກາດເຂົ້າຮຽນໃນການສຶກສາຊັ້ນສູງ ແຜນງານປັບປຸງຄຸນນະພາບແລະຄວາມສອດຄ່ອງ, ແຜນງານບໍລິຫານ ແລະ ຄຸ້ມຄອງ).

ປຶດລາຍງານກ່ຽວກັບແຜນປະຕິຮູບການສຶກສາຊັ້ນສູງຕໍ່ກອງປະຊຸມຄົບຄະນະຄັ້ງທີ 5 ຂອງຄະນະກຳມາທິການແຫ່ງຊາດການປະຕິຮູບລະບົບການສຶກສາແຫ່ງຊາດ. 20 ເມສາ 2011.

ກົມການສຶກສາຊັ້ນສູງ ກະຊວງສຶກສາທິການ ແລະ ກິລາ. (2015). ດຳລັດວ່າດ້ວຍການສຶກສາຊັ້ນສູງ: ສະພາບທອງການພິມ.

ຈັນທາ ພິມມານິນ. (ພສ.2546). ປະຕິຮູບການສຶກສາການກຽມຄວາມພ້ອມຂອງຄູແລະຜູ້ບໍລິຫານມືອາຊີບ. Journal/Newspaper Title ວິຊາການ Source 6, (1), 63.

ຈຸລະຊີບ ຊົມວັນໂນ. (ພສ.2557). ໂລກໃນສັດຕະວັດທີ 21: ກອບການວິເຄາະຄວາມສຳພັນລະຫວ່າງປະເທດ. ກຸງເທບ: ໂຮງພິມແຫ່ງຈຸລາລົງກອນມະຫາວິທະຍາໄລ.

ສຳນັກງານປະຕິຮູບການສຶກສາ. (ພສ.2545). ປະຕິຮູບການສຶກສາແນວທາງສູ່ການປະຕິບັດ. ກຸງເທບ: ພິມດີ.

ສີຣິໄຊຊານ ຟັກຈຳຮູນ. (ພສ.2539). ວິວັດທະນາການ ແລະ ອະນາຄົດຂອງມະຫາວິທະຍາໄລນາຣີສິນ ໃນການພັດທະນາສີລະປະວັດທະນະທຳໄທ. ກຸງເທບ: ຈຸລາລົງກອນມະຫາວິທະຍາໄລ.

ສຸບັນ ເອື່ອມວິຈານ. (ພສ.2550). ອະນາຄົດທີ່ເປັນໄປໄດ້ຂອງມະຫາວິທະຍາໄລມະຫາສາຣະຄາມໃນທົດສະວັດໜ້າ. ວິທະຍານິພົນລະດັບປະລິນຍາເອກ ສາຂາວິຊາບໍລິຫານການສຶກສາ ມະຫາວິທະຍາໄລຂອນແກ່ນ.

ສຸພານີ ສະຫລິດວານິດ. (ພສ.2549). ພຶດຕິກຳອົງການສະໄໝໃໝ່: ແນວຄິດ ແລະ ທິດສະດີ. ກຸງເທບ: ມະຫາວິທະຍາໄລທຳມະສາດ.

ສຸຣັດ ສີລະປະອະນັນ. (ພສ.2543). ໂຮງຮຽນຍຸກປະຕິຮູບການສຶກສາ. ປັບປຸງສະພາວະພາຍໃນດ້ານການສອນ ແລະ ການບໍລິຫານ ໂຮງຮຽນ. 14 ພຶດສະພາ ພສ.2560, ຈາກ: https://www.chan2.obec.go.th/.../afovmvUUVlw20150521201823.pdf.

ຊົມພູນຸດ ຮ້ອມຊາດ. (ພສ.2548). ອະນາຄົດຂອງຫຼັກສູດວິຊາຊີບຄູໃນທົດສະວັດໜ້າ (ພສ. 2550-2559). ວິທະຍານິພົນລະດັບປະລິນຍາເອກ ສາຂາວິຊາການວິໄຈ ແລະ ພັດທະນາຫຼັກສູດ ມະຫາວິທະຍາ ໄລສີນະຄະຣິນວິໂຣດ.

ດາຣະນີ ຄຳແຫງ. (ພສ.2547). ສຶກສາອະນາຄົດ ແລະ ການພັດທະນາລະບົບການຮຽນ-ການສອນສະຖິຕິໂດຍໃຊ້ເຄືອຂ່າຍຄອມພິວເຕີໃນລະດັບການສຶກສາຊັ້ນສູງພາຍໃນປີ ພສ. 2550. ກຸງເທບ: ສຳນັກງານຄະນະກຳມະການວິໄຈແຫ່ງຊາດ.

ຖະໜອມວັນ ປະເສີດຈະເລີນສຸກ. (ພສ.2549). ອະນາຄົດການເປັນມະຫາວິທະຍາໄລຂອງມະຫາວິທະຍາໄລຂອນແກ່ນ. ວິທະຍານິພົນລະດັບປະລິນຍາເອກ ສາຂາວິຊາບໍລິຫານການສຶກສາ ມະຫາວິທະຍາໄລຂອນແກ່ນ.

ທົງໄຊ ສັນຕິວົງ. (ພສ.2539). ວິທີການປ່ຽນແປງອົງການ. ພິມຄັ້ງທີ 2. ກຸງເທບ: ໄທວັດທະນາພານິດ.

ທິຣະ ຮຸນຈະເລີນ. (ພສ.2550). ການບໍລິຫານໂຮງຮຽນຍຸກປະຕິຮູບການສຶກສາ. ກຸງເທບ: ເອັກຊເປີເນັດ.

ນິບພິງ ບຸນຈິດຕຣາດຸມ. (ພສ.2534). ຫຼັກການບໍລິຫານການສຶກສາ. ກຸງເທບ: ບໍພິດ.

ບຸນຊຶມ ສີສະອາດ. (ພສ.2554). ການວິໄຈກ່ຽວກັບບໍລິຫານການສຶກສາ. 23 ເມສາ ພສ.2560, ຈາກ: https://ulibm.bpi.ac.th/ULIB/dublin.php?ID=3200.

ປະທຸມມາດ ຣັກວົງ. (ພສ.2544). ສຶກສາອະນາຄົດຂອງຣະບົບການປະກັນຄຸນນະພາບອາຊີວະສຶກສາ: ການວິໄຈແບບ EDFR. ວິທະຍານິພົນລະດັບປະລິນຍາໂທ ສາຂາວິຊາການວິໄຈການສຶກສາ ມະຫາວິທະຍາໄລມະຫາສາຣະຄາມ.

ປັດຊະຍາ ເວສາຣັດ. (ພສ.2545). ຫຼັກການຈັດການສຶກສາ. ກຸງເທບ: ສຳນັກງານປະຕິຮູບການສຶກສາ.

ປອງພົນ ອະດິເຣກສານ. (ພສ.2546). ການປະຕິຮູບລະບົບການສຶກສາ. 16 ສິງຫາ ພສ.2560, from https://www.nectec.or.th/schoolnet/../10000-10323.html.

ພະນິມ ພິງໄພບູນ. (ພສ.2543). ແມ່ນຫຍັງຄືເປົ້າໝາຍການປະຕິຮູບການສຶກສາ. ວາລະສານລັດຖະກອນຄູ, 3 (ເມສາ-ພຶດສະພາ), 23-25.

ພະມະຫາສາຄອນ ພັກດີນອກ. (ພສ.2555). ທິດທາງຂອງມະຫາວິທະຍາໄລມະຫາມະກຸດລາດຊະວິທະຍາໄລໃນທົດສະວັດໜ້າ (ພ ສ.2555-2564). ວິທະຍານິພົນລະດັບປະລິນຍາເອກ ສາຂາວິຊາບໍລິຫານການສຶກສາ ມະຫາວິທະຍາໄລມະຫາມະກຸດລາດຊະວິທະຍາໄລ.

ພົນຊຸລີ ອາຊະວະອຳລຸງ. (ພສ.2546). ສຶກສາຮູບແບບການບໍລິຫານງານຂອງຈຸລະລິງກອນມະຫາວິທະຍາໄລ ໃນອະນາຄົດ. ວາລະສານວິທີວິທະຍາການວິໄຈ, 16(4), 651-678.

ຮຸ້ງທະວີ ພັນນະນາ. (ພສ.2555). ໜ້າທີ່ຂອງການບໍລິຫານ (Function of management). 24 ສິງຫາ ພສ.2560, ຈາກ: http://www.learners.in.th/blogs/posts/298631.

ວະຣຳພົນ ຢູ່ໃນທຳ. (ພສ.2544). ວະນາຄົດສຳລັບການໃຊ້ອິນເຕີເນັດຂອງມະຫາວິທະຍາໄລຣາມຄຳແຫງ ໃນປີ ພສ.2548 ດ້ານເຕັກນິກ EDFR. ວິທະຍານິພົນລະດັບປະລິນຍາໂທ ສາຂາວິຊາບໍລິຫານການສຶກສາ ມະຫາວິທະຍາໄລຣາມຄຳແຫງ.

ວັນທະນາ ອະມະຕາຣິຍະກຸນ. (ພສ.2552). ອະນາຄົດຂອງມະຫາວິທະຍາໄລເຕັກໂນໂລຊີ ຣາຊາມົງຄົນອີສານໃນທົດສະຕະວັດໜ້າ. ວິທະຍານິພົນລະດັບປະລິນຍາເອກ ສາຂາວິຊາບໍລິຫານ ແລະ ພັດທະນາການສຶກສາ ມະຫາວິທະຍາໄລມະຫາສາຣະຄາມ.

ວິໄຊ ຕັນສີຣິ. (ພສ.2542). ໂສມໜ້າຂອງການສຶກສາໄທໃນອະນາຄົດ: ແນວຄິດສູ່ການປະຕິຮູບໃນພະຣາດຊະບັນຍັດ. 17 ພຶດສະພາ ພສ. 2560, from https://www.thesis.rru.ac.th/files/pdf/1222246706.

ອຸໄທ ບຸນປະເສີດ. (ພສ.2547). ລາຍງານການວິໄຈເລື່ອງບົດບາດ ແລະ ການມີສ່ວນຮ່ວມໃນການບໍລິຫານ ແລະ ການຈັດການສຶກສາຂອງຄະນະກຳມະການ ສະຖານທີ່ສຶກສາໃນປະເທດທີ່ຄັດສັນ. 27 ພຶດສະພາ ພສ.2560, from https://www.e-library.onecapps.org/.

ອຸໄລວັນ ວິນະພັນ. (ພສ.2545). ອະນາຄົດຂອງການຈັດຫຼັກສູດສິ່ງແວດລ້ອມສຶກສາໃນມະຫາວິທະຍາໄລສິງ. ວາລະສານພຸດທະສຶກສາ, 9(3), 112.